ທຄຕລ.ສບ.2022 ( V.1 )

# ແບບຟອມລົງທະບຽນຂໍນຳໃຊ້ບັດເຄຼດິດ

ສາຂາ:............................................

ໜ່ວຍບໍລິການ:.................................

ຮຽນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

☐ ບັດດ່ວນ
☐ ບັດຫມົດອາຍຸເກີນ 45 ວັນແຕ່ບໍ່ເກີນ 1 ປີ
☐ ບັດຮ່ວມວົງເງິນ

ຂ້າພະເຈົ້າຂໍສະໝັກໃຊ້ບໍລິການບັດເຄຼດິດ ທຄຕລ ປະເພດລຸ່ມນີ້ ໃນຮູບແບບ: ☐ ມີຫຼັກຊັບຄ້ຳປະກັນ ☐ ບໍ່ມີຫຼັກຊັບຄ້ຳປະກັນ ☐ ຄ້ຳປະກັນດ້ວຍບັນຊີເງິນຝາກ

| ບັດ VISA | ບັດ Mastercard | ບັດ JCB | ບັດ Co-Brand |
|---|---|---|---|
| ☐ ບັດເຄຼດິດ Platinum | ☐ ບັດເຄຼດິດ World Mastercard | ☐ ບັດເຄຼດິດຄຳ<br>☐ ບັດເຄຼດິດເງິນ | ☐ ບັດເຄຼດິດ Platinum ☐ ບັດເຄຼດິດຄຳ<br>☐ ບັດເຄຼດິດຄຳ (ມີປະກັນໄພ) ☐ ບັດເຄຼດິດເງິນ |

**1. ຂໍ້ມູນສ່ວນບຸກຄົນ:**

ເພດ: ☐ຊາຍ ☐ຍິງ; ສັນຊາດ:.......................................

ຊື່ ແລະ ນາມສະກຸນ (ພາສາລາວ):

.........................................................................................

ຊື່ ແລະ ນາມສະກຸນເປັນພາສາອັງກິດ**(ຕົວພິມໃຫຍ່ລວມກັນສູງສຸດ 20 ຕົວອັກສອນ):**

| | | | | | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | | | | | | | | | | | | | | | | |

ວັນເດືອນປີເກີດ:...............................;ບ້ານ:.............................................

ເມືອງ:.........................................; ແຂວງ:.........................................

☐ບັດປະຈຳໂຕ ☐ ໜັງສືເດີນທາງ ☐ສຳມະໂນຄົວ ☐ໜັງສືຢັ້ງຢືນຕົວຕົນປະເພດອື່ນໆ

ເລກທີ:.........................................;ອອກໂດຍ:........................................

ອອກວັນທີ:.........................................;ໝົດອາຍຸ:..................................

ທີ່ຢູ່ປັດຈຸບັນ ບ້ານ:..........................................;ເມືອງ:..............................

ແຂວງ:..............................................;ເບີໂທ:.......................................

ອີເມວ:..............................................................................................

ລະດັບການສຶກສາ: ..................................; ສະຖານະພາບ: ☐ ໂສດ ☐ ແຕ່ງງານ

**2. ຂໍ້ມູນບ່ອນເຮັດວຽກ:**

ບ່ອນເຮັດວຽກ: ..........................................................................

ທີ່ຕັ້ງ:...............................................................................................

ເບີໂທລະສັບຕັ້ງໂຕະ/ມືຖື:.....................................................................

**3. ວົງເງິນ ແລະ ຮູບແບບການຄ້ຳປະກັນ:**

ຈຳນວນຫຼັກຊັບຄ້ຳປະກັນ.......................................................................

ເລກບັນຊີ:.........................................................................................

ຊື່ບັນຊີ:...........................................................................................

ວົງເງິນສິນເຊື່ອຂອງບັດ:.................................................... USD/ເດືອນ

(ຂຽນເປັນໂຕໜັງສື:.........................................................................)

*ຄ້ຳປະກັນດ້ວຍເງິນ **ໂດລາ** ວົງເງິນສິນເຊື່ອແມ່ນໄດ້ 85% ຂອງວົງເງິນຄ້ຳປະກັນ.

*ຄ້ຳປະກັນດ້ວຍເງິນ **ກີບ/ບາດ/ຢວນ** ວົງເງິນສິນເຊື່ອແມ່ນໄດ້ 80% ຂອງວົງເງິນຄ້ຳປະກັນ.

**4. ຮູບແບບການຊຳລະສະສາງ ແລະ ການສົ່ງໃບແຈ້ງຍອດການນຳໃຊ້:**

☐ ຊຳລະແບບ Manual (ເງິນສົດ, ແຊັກ, ເງິນໂອນ, BCEL One)

☐ ຕັດໜີ້ຈາກບັນຊີເງິນຝາກອັດຕະໂນມັດ (Auto Payment)

ເລກບັນຊີ:.......................................................................................

ຊື່ບັນຊີ:..........................................................................................

- ອີເມວຮັບ Statement:.......................................................................
- ເລກບັດເຄຼດິດ ທຄຕລ ອື່ນໆ (ຖ້າມີ).......................................

***ໝາຍເຫດ: ສຳລັບຜູ້ສະໝັກນຳໃຊ້ບັດເຄຼດິດ**

ບັດຫຼັກ ຕ້ອງມີອາຍຸ 18 ປີ ຂຶ້ນໄປ.

ບັດເສີມ ຕ້ອງມີອາຍຸ 15 ປີ ຂຶ້ນໄປ.

**5. ເງື່ອນໄຂການຂໍວົງເງິນໃຊ້ຈ່າຍຕໍ່ມື້:**

☐ ອີງຕາມວົງເງິນໃຊ້ຈ່າຍຕໍ່ມື້/ຕໍ່ຄັ້ງຕາມເງື່ອນໄຂການນຳໃຊ້ບັດ ທຄຕລ

☐ ນຳໃຊ້ວົງເງິນແບບກຳນົດເອງ (ສະເພາະບັດທີ່ມີວົງເງິນສູງເທົ່ານັ້ນ)

ຜ່ານເຄື່ອງຮັບບັດຈຳນວນ: ……………………………USD/ຄັ້ງ/ມື້

ຜ່ານທາງອອນລາຍຈຳນວນ/ມື້USD……..…...…………USD/ຄັ້ງ/ມື້

**6. ການຢັ້ງຢືນຂອງລູກຄ້າ:**

ຂ້າພະເຈົ້າ ຢືນຢັນວ່າຂໍ້ມູນທີ່ຂ້າພະເຈົ້າໄດ້ປະກອບໃນແບບຟອມນີ້ເປັນຂໍ້ມູນທີ່ຖືກຕ້ອງ ແລະ ເປັນຈິງທຸກປະການ. ຂ້າພະເຈົ້າອະນຸຍາດໃຫ້ ທຄຕລ ຕິດຕໍ່ສອບຖາມຂໍ້ມູນຈາກສູນເປີດເຜີຍຂໍ້ມູນຕ່າງໆທີ່ກ່ຽວຂ້ອງກັບລະບົບທະນາຄານ ແລະ ສະຖາບັນການເງິນຢ່າງຖືກຕ້ອງຕາມກົດໝາຍພ້ອມທັງຈະໃຫ້ຄວາມຮ່ວມມືໃນການສະໜອງຂໍ້ມູນຕ່າງໆຕາມທີ່ທະນາຄານຕ້ອງການ ໂດຍບໍ່ມີຂໍ້ຂັດແຍ່ງທາງດ້ານກົດໝາຍແຕ່ຢ່າງໃດ.

**ລົງລາຍເຊັນ ແລະ ຊື່ແຈ້ງ**

| **ເຈົ້າຂອງບັດ** | **ຜູ້ຄ້ຳປະກັນ (ຖ້າມີ)** |
|---|---|
| | |

ວັນທີ……..…ເດືອນ……..…ປີ……...…

**ພະນັກງານຮັບຟອມ**

**ຫົວຫນ້າຂະແໜງ/ໜ່ວຍບໍລິການ/ໜ່ວຍງານ**

**ຫົວຫນ້າພະແນກ/ສູນ/ສາຂາ**

**ຜູ້ອຳນວຍການ**

***ເອກະສານຈຳເປັນສຳລັບປະກອບແບບຟອມສະໝັກບັດເຄຼດິດທີ່ຄ້ຳປະກັນດ້ວຍບັນຊີເງິນຝາກ**

☐ ແບບຟອມລົງທະບຽນບັດ; ສັນຍາການອອກບັດ 2 ສະບັບ; ຂໍ້ແນະນຳ ແລະ ເງື່ອນໄຂການນຳໃຊ້ບັດເຄຼດິດ 2 ສະບັບ

☐ ສຳເນົາບັດປະຈຳຕົວ, ໜັງສືເດີນທາງ, ປຶ້ມສຳມະໂນຄົວ ຫຼື ເອກະສານຢັ້ງຢືນຕົວຕົນປະເພດອື່ນໆ ທີ່ສາມາດນຳໃຊ້ໄດ້ຕາມລະບຽບຂອງ ທຄຕລ

☐ ໃບ Block ບັນຊີ (ກໍລະນີຄ້ຳປະກັນດ້ວຍບັນຊີຝາກປະຈຳ, ສະສົມບຳນານ, ເງິນຝາກລູກຫຼານ)

☐ ເອກະສານອື່ນໆ ອີງຕາມການຮຽກຮ້ອງຂອງ ທຄຕລ (ຖ້າມີ)

***ເອກະສານຈຳເປັນສຳລັບປະກອບແບບຟອມສະໝັກບັດເຄຼດິດທີ່ມີຫຼັກຊັບຄ້ຳກັນ**

☐ ແບບຟອມລົງທະບຽນບັດ; ສັນຍາການອອກບັດ 2 ສະບັບ; ຂໍ້ແນະນຳ ແລະ ເງື່ອນໄຂການນຳໃຊ້ບັດເຄຼດິດ 2 ສະບັບ

☐ ສຳເນົາບັດປະຈຳຕົວ, ໜັງສືເດີນທາງ, ປຶ້ມສຳມະໂນຄົວ ຫຼື ເອກະສານຢັ້ງຢືນຕົວຕົນປະເພດອື່ນໆ ທີ່ສາມາດນຳໃຊ້ໄດ້ຕາມລະບຽບຂອງ ທຄຕລ

☐ ໃບຢັ້ງຢືນຫຼັກຊັບທີ່ຈະນຳມາຄ້ຳປະກັນ

☐ ເອກະສານອື່ນໆອີງຕາມການຮຽກຮ້ອງຂອງ ທຄຕລ (ຖ້າມີ)

***ເອກະສານຈຳເປັນສຳລັບປະກອບແບບຟອມສະໝັກບັດເຄຼດິດທີ່ບໍ່ມີຫຼັກຊັບຄ້ຳກັນ**

☐ ແບບຟອມລົງທະບຽນບັດ; ສັນຍາການອອກບັດ 2 ສະບັບ; ຂໍ້ແນະນຳ ແລະ ເງື່ອນໄຂການນຳໃຊ້ບັດເຄຼດິດ 2 ສະບັບ

☐ ສຳເນົາບັດປະຈຳຕົວ, ໜັງສືເດີນທາງ, ປຶ້ມສຳມະໂນຄົວ ຫຼື ເອກະສານຢັ້ງຢືນຕົວຕົນປະເພດອື່ນໆ ທີ່ສາມາດນຳໃຊ້ໄດ້ຕາມລະບຽບຂອງ ທຄຕລ

☐ ໃບຢັ້ງຢືນພະນັກງານ (ສຳລັບພະນັກງານລັດ)

☐ ໃບຢັ້ງຢືນລາຍຮັບ-ລາຍຈ່າຍ (ລາຍຮັບຢ່າງໜ້ອຍ 1,800,000/ເດືອນ)

☐ ໃບສະຫຼຸບຊັບສົມບັດ (ສຳລັບບໍລິສັດ ຫຼື ນິຕິບຸກຄົນ)

☐ ໃບລາຍງານຜົນໄດ້ຮັບ (ສຳລັບບໍລິສັດ ຫຼື ນິຕິບຸກຄົນ)

☐ ໃບທະບຽນອາກອນ ແລະ ວິສາຫະກິດ (ສຳລັບບໍລິສັດ ຫຼື ນິຕິບຸກຄົນ)

☐ Statement ບັນຊີ ທຄຕລ ຢ່າງໜ້ອຍ 6 ເດືອນຂຶ້ນໄປ

☐ ເອກະສານອື່ນໆອີງຕາມການຮຽກຮ້ອງຂອງ ທຄຕລ (ຖ້າມີ)

**ໝາຍເຫດ:**

ເອກະສານຢັ້ງຢືນຕົວຕົນຕ້ອງບໍ່ໝົດອາຍຸ ແລະ ຕ້ອງແຈ້ງສະບັບຕົ້ນກັບພະນັກງານທະນາຄານ

- **ສຳລັບລູກຄ້າທີ່ສະໝັກບັດເຄຼດິດທີ່ຄ້ຳປະກັນດ້ວຍຫຼັກຊັບ ແລະ ບໍ່ມີຫຼັກຊັບຄ້ຳປະກັນ**

ໃນກໍລະນີທີ່ເອກະສານປະກອບບໍ່ຄົບ ຫຼື ບໍ່ສາມາດສະໜອງເອກະສານໄດ້ຄົບຖ້ວນ ກະລຸນາລະບຸເຫດຜົນ:

…………………………………………………………………………………………………………………………

…………………………………………………………………………………………………………………………

…………………………………………………………………………………………………………………………

**ຊື່ ແລະ ລາຍເຊັນຜູ້ສະໝັກ:**

- **ສຳລັບພາກສ່ວນທີ່ຮັບລູກຄ້າ**

ກະລຸນາມີຄຳເຫັນໃນກໍລະນີທີ່ຜູ້ສະໝັກບັດເອກະສານບໍ່ຄົບ ຫຼື ບໍ່ສາມາດສະໜອງເອກະສານໄດ້:

…………………………………………………………………………………………………………………………

…………………………………………………………………………………………………………………………

…………………………………………………………………………………………………………………………

…………………………………………………………………………………………………………………………

**ຫົວໜ້າພະແນກ/ສູນ/ສາຂາ** **ຫົວໜ້າຂະແໜງ/ໜ່ວຍບໍລິການ/ໜ່ວຍງານ**

ທຄຕລ.ສບ.2022 ( V.1 )

# ຂໍ້ແນະນຳ ແລະ ເງື່ອນໄຂການນຳໃຊ້ບັດເຄຼດິດ VISA Platinum Credit

## I. <u>ຂໍ້ແນະນຳຂອງການອອກບັດ VISA Platinum Credit</u>

ລູກຄ້າສາມາດສະໝັກນຳໃຊ້ບັດເຄຼດິດໃນ 3 ຮູບແບບຄື: **1. ບັດເຄຼດິດມີຫຼັກຊັບຄ້ຳປະກັນ:** ລູກຄ້າສາມາດນຳໃຊ້ບັນຊີເງິນຝາກຈາກທະນາຄານອື່ນ ຫຼື ຫຼັກຊັບປະເພດອື່ນໆເຊັ່ນ: ໃບຕາດິນ/ສິດນຳໃຊ້ທີ່ດິນທີ່ມີມູນຄ່າພຽງພໍຕາມເງື່ອນໄຂທີ່ກຳນົດໄວ້ ໂດຍຜ່ານການຄົ້ນຄວ້າຈາກຄະນະກຳມະການສິນເຊື່ອ ທຄຕລ **2. ບັດເຄຼດິດບໍ່ມີຫຼັກຊັບຄ້ຳປະກັນ:** ລູກຄ້າສະເໜີໃຫ້ທະນາຄານພິຈາລະນາຈາກເງິນເດືອນ, ລາຍຮັບ-ລາຍຈ່າຍ ແລະ ເງື່ອນໄຂອື່ນໆທີ່ຈຳເປັນ ເພື່ອພິຈາລະນາວົງເງິນທີ່ເໝາະສົມໃຫ້ແກ່ລູກຄ້າ **3. ບັດເຄຼດິດທີ່ຄ້ຳປະກັນດ້ວຍບັນຊີເງິນຝາກ:** ລູກຄ້າອອກບັດເຄຼດິດໂດຍນຳເອົາບັນຊີເງິນຝາກນຳ ທຄຕລ ມາຄ້ຳປະກັນ, ໂດຍປະເພດບັນຊີເງິນຝາກທີ່ສາມາດນຳມາຄ້ຳປະກັນໃນການຂໍອອກບັດ ປະກອບມີ: ເງິນຝາກທີ່ມີກຳນົດ, ເງິນຝາກປະຢັດ, ບັນຊີຝາກປະຢັດເພື່ອລູກຫລານ, ບັນຊີຝາກປະຢັດສະສົມບຳນານ ແລະ ເງິນຝາກກະແສລາຍວັນ ຂອງ ທຄຕລ.

- **ກໍລະນີຄ້ຳປະກັນດ້ວຍບັນຊີສະກຸນເງິນ ໂດລາ ແມ່ນລູກຄ້າຈະໄດ້ຮັບວົງເງິນບັດ 85% ຂອງວົງເງິນຄ້ຳປະກັນ ແລະ ກໍລະນີຄ້ຳປະກັນດ້ວຍສະກຸນເງິນ ກີບ/ບາດ/ຢວນ ແມ່ນລູກຄ້າຈະໄດ້ຮັບວົງເງິນບັດ 80% ຂອງວົງເງິນຄ້ຳປະກັນ.**

## II. <u>ເງື່ອນໄຂສຳລັບລູກຄ້າທີ່ຈະເຮັດບັດ VISA Platinum Credit</u>

**1.** ລູກຄ້າທີ່ຕ້ອງການອອກບັດ VISA Platinum Credit ຕ້ອງມີບັນຊີເງິນຝາກຢ່າງໜ້ອຍ ໜຶ່ງບັນຊີກັບ ທຄຕລ ມະຫາຊົນ.

**2.** ເພື່ອຄວາມປອດໄພໃນການນຳໃຊ້ບັດ ເຈົ້າຂອງບັດຕ້ອງລົງທະບຽນນຳໃຊ້ຜະລິດຕະພັນເສີມຕ່າງໆໃນການຕິດຕາມ ແລະ ຄຸ້ມຄອງການເຄື່ອນໄຫວຂອງບັດ ເຊັ່ນ: BCEL One, SMS banking ແລະ ຜະລິດຕະພັນເສີມອື່ນໆຕາມຄວາມເໝາະສົມ.

**3.** ຈຳນວນເງິນໃນບັນຊີເງິນຝາກທີ່ລູກຄ້ານຳມາຄ້ຳປະກັນການອອກບັດ ແມ່ນໃຊ້ເພື່ອຄ້ຳປະກັນການອອກບັດເທົ່ານັ້ນ. ເຈົ້າຂອງບັດຈະບໍ່ສາມາດນຳໃຊ້ຈຳນວນເງິນດັ່ງກ່າວ ເພື່ອຊຳລະສະສາງບັນດາລາຍຈ່າຍ ຫຼື ຊຳລະໜີ້ໃນແຕ່ລະເດືອນຂອງຕົນໄດ້.

**4.** ແຕ່ລະເດືອນທະນາຄານຈະສົ່ງ STATEMENT (ໃບລາຍງານບັນດາລາຍການເຄື່ອນໄຫວຂອງບັດທີ່ຕ້ອງຊຳລະ ເຊິ່ງລວມມີບັນດາລາຍຈ່າຍ, ຄ່າທຳນຽມ ແລະ ດອກເບ້ຍທີ່ພົວພັນກັບບັດ Credit) ໃຫ້ເຈົ້າຂອງບັດຜ່ານທາງອີເມວທີ່ໄດ້ລະບຸໃນແບບຟອມສະໝັກບັດ ເລີ່ມແຕ່ວັນທີ 25 ຂອງທຸກໆເດືອນ. ເຖິງແມ່ນວ່າເຈົ້າຂອງບັດຈະໄດ້ຮັບໃບ STATEMENT ທີ່ທະນາຄານເປັນຜູ້ສົ່ງໃຫ້ ຫຼື ບໍ່ກໍ່ຕາມ, ເຈົ້າຂອງບັດມີໜ້າທີ່ຊຳລະສະສາງໜີ້ຄ້າງຈ່າຍທັງໝົດຄືນໃຫ້ທະນາຄານຕາມລະບຽບທີ່ທາງທະນາຄານໄດ້ວາງອອກ.

**5.** ກຳນົດເວລາຊຳລະຄ່າໃຊ້ຈ່າຍ ຫຼື ໜີ້ໃນ STATEMENT ບັດ Credit ຂອງທ່ານມີດັ່ງນີ້:

- ກໍລະນີຊຳລະຄືນດ້ວຍເງິນສົດ ເຈົ້າຂອງບັດສາມາດຊຳລະໜີ້ເວລາໃດກໍ່ໄດ້ຫຼັງຈາກ Statement ພິມອອກໃນວັນທີ 25 ແຕ່ຕ້ອງບໍ່ກາຍກຳນົດມື້ທີ່ໄດ້ລະບຸໄວ້ໃນ STATEMENT ຂອງເດືອນດັ່ງກ່າວ.
- ກໍລະນີຊຳລະແບບ Auto ດ້ວຍການອະນຸມັດໃຫ້ທະນາຄານຕັດບັນຊີແບບອັດຕະໂນມັດ ແມ່ນຜູ້ຖືບັດຕ້ອງມອບເງິນເຂົ້າບັນຊີທີ່ແຈ້ງໄວ້ເພື່ອຊຳລະໜີ້ ກ່ອນຢ່າງໜ້ອຍ 1 (ໜຶ່ງ) ມື້ ແລະ ບໍ່ໃຫ້ກາຍ 12:00 ໂມງຂອງວັນດັ່ງກ່າວ; ເຊິ່ງວັນທີກຳນົດໃຫ້ຊຳລະແມ່ນໄດ້ລະບຸຢູ່ເທິງໃບ Statement ປະຈຳເດືອນ.
- ຖ້າລູກຄ້າຊຳລະໜີ້ຄືນຊ້າກວ່າມື້ທີ່ທະນາຄານກຳນົດໄວ້ ລູກຄ້າຈະຕ້ອງໄດ້ເສຍຄ່າປັບໄໝຊຳລະຊ້າ 2% ຂອງວົງເງິນທີ່ຕ້ອງຊຳລະຕ່ຳສຸດ (ຕ່ຳສຸດ 5 USD) ແລະ ຖືກຄິດໄລ່ດອກເບ້ຍ 16%/ປີ ຂອງວົງເງິນທີ່ໃຊ້ພາຍໃນເດືອນ, ຕ່ຳສຸດ 1 USD (ເລີ່ມແຕ່ມື້ໃຊ້ຈ່າຍ/ຖອນສົດເຖິງມື້ຊຳລະສະສາງ) ສ່ວນອັດຕາດອກເບ້ຍ ແມ່ນຂຶ້ນກັບນະໂຍບາຍ ຂອງ ທຄຕລ ວາງອອກໃນແຕ່ລະໄລຍະ.
- ວົງເງິນທີ່ຕ້ອງຊຳລະຕ່ຳສຸດຂອງບັດເຄຼດິດ ທຄຕລ ແມ່ນ 10% ຂອງຍອດໜີ້ທັງໝົດໃນໃບແຈ້ງໜີ້, ຕ່ຳສຸດ 20 ໂດລາ.
- ກໍລະນີບັດໃດໜຶ່ງຂອງລູກຄ້າຖືກລັອກເນື່ອງຈາກຄ້າງຊຳລະ ບັດອື່ນທີ່ຮ່ວມວົງເງິນ ແລະ ບັດເສີມກໍ່ຈະຖືກລັອກເຊັ່ນດຽວກັນ.

**6.** ຄ່າທຳນຽມຖອນເງິນສົດຈາກຕູ້ ATM ຂອງຕ່າງທະນາຄານ ລວມເຖິງຖອນຈາກເຄື່ອງຮູດ EDC (ທັງໃນ ແລະ ນອກເຄືອຂ່າຍ) ແມ່ນ 3% (ຕ່ຳສຸດ 3 USD) ຕໍ່ຄັ້ງ; ສຳລັບຄ່າທຳນຽມອື່ນໆເຊັ່ນ: ຄ່າທຳນຽມຂໍບັດດ່ວນ, ອອກລະຫັດໃໝ່, ປ່ຽນບັດໃໝ່, ປ່ຽນແປງບັນຊີຄ້ຳປະກັນ ຫຼື ບັນຊີຊຳລະ, ປ່ຽນແປງວົງເງິນຂອງບັດ ແລະ ຄ່າທຳນຽມອື່ນໆທີ່ຕິດພັນແມ່ນອີງຕາມລະບຽບທີ່ປະກາດນຳໃຊ້ເປັນແຕ່ລະໄລຍະ. ອັດຕາແລກປ່ຽນໃນການນຳໃຊ້ບັດທີ່ເປັນສະກຸນເງິນຕ່າງກັນກັບບັນຊີທີ່ນຳໃຊ້ເພື່ອອອກບັດ ຫຼື ນຳໃຊ້ຢູ່ຕ່າງປະເທດແມ່ນອີງໃສ່ອັດຕາແລກປ່ຽນປະຈຳວັນທີ່ ທຄຕລ ປະກາດໃຊ້; ໃນກໍລະນີ ລາຍການນຳໃຊ້ບັດບໍ່ແມ່ນສະກຸນໂດລາສະຫະລັດ (Non-USD Transaction) ຈະມີຄ່າທຳນຽມສຳຮອງອັດຕາແລກປ່ຽນ 1% ຂອງມູນຄ່າທີ່ຮຽກເກັບເຂົ້າມາໃນລະບົບທະນາຄານ.

**7.** ວົງເງິນສິນເຊື່ອພ້ອມຄ່າທຳນຽມ ແລະ ການກຳນົດວົງເງິນໃຊ້ຈ່າຍພ້ອມຈຳນວນຄັ້ງນຳໃຊ້ໃນແຕ່ລະມື້.

| **ປະເພດບັດ** | **ວົງເງິນສິນເຊື່ອບັດ** | **ຄ່າສະໝັກສະມາຊິກ** | | **ຄ່າບຳລຸງຮັກສາປະຈຳປີ** | |
|---|---|---|---|---|---|
| | | **ບັດຫຼັກ** | **ບັດເສີມ** | **ບັດຫຼັກ** | **ບັດເສີມ** |
| **Visa Platinum Credit** | ≤ 100,000 USD | 35 | 25 | 75 | 65 |

| **ເນື້ອໃນ** | **Visa Platinum Credit** | |
|---|---|---|
| | **ໃນປະເທດ** | **ຕ່າງປະເທດ** |
| ວົງເງິນໃຊ້ຈ່າຍສູງສຸດ/ມື້ (ໂດລາ) | 30,000 | 40,000 |
| ຈຳນວນຄັ້ງໃຊ້ຈ່າຍ/1ມື້ | 50 | 60 |
| ວົງເງິນໃຊ້ຈ່າຍສູງສຸດ/ຄັ້ງ (ໂດລາ) | 30,000 | 36,000 |
| ວົງເງິນຖອນສົດ/1ມື້ (ໂດລາ) | 4,000 | 4,000 |
| ຈຳນວນຄັ້ງຖອນສົດ/1ມື້ | 20 | 30 |
| ວົງເງິນຖອນສົດສູງສຸດ/ຄັ້ງ (ໂດລາ) | 4,000 | 4,000 |
| ວົງເງິນໃຊ້ຈ່າຍອອນລາຍສູງສຸດ/1ມື້ (ໂດລາ) | 15,000 | 18,000 |
| ຈຳນວນຄັ້ງໃຊ້ຈ່າຍອອນລາຍ/1ມື້ | 20 | 30 |

**<u>ໝາຍເຫດ</u>: *ຄ່າທຳນຽມ ແລະ ວົງເງິນນຳໃຊ້ຂອງບັດອາດມີການປ່ຽນແປງ ໂດຍອີງຕາມການປະກາດນຳໃຊ້ໃນແຕ່ລະໄລຍະ.**

**8**. ກໍລະນີລູກຄ້າຕ້ອງການນຳໃຊ້ວົງເງິນ ຫຼື ຈຳນວນຄັ້ງຕໍ່ລາຍການ/ຕໍ່ມື້ ສູງກວ່າທີ່ທະນາຄານອະນຸມັດໃຫ້ໃນເບື້ອງຕົ້ນແມ່ນສາມາດເຂົ້າມາພົວພັນປ່ອງບໍລິການເພື່ອຂຽນໃບສະເໜີ ໃຫ້ ທຄຕລ ພິຈາລະນາເປັນກໍລະນີພິເສດ.

**9**. ເພື່ອຮັບປະກັນຄວາມປອດໄພໃນການຮັກສາບັດຢູ່ທະນາຄານ, ຖ້າລູກຄ້າບໍ່ມາພົວພັນຮັບບັດຫຼັງຈາກ 30 ວັນນັບແຕ່ມື້ນັດຮັບບັດ ແມ່ນບັດຈະຖືກປິດແລະທຳລາຍ ໂດຍທະນາຄານຈະບໍ່ສົ່ງຄ່າທຳນຽມອອກບັດຄືນ.

**10**. ຖ້າຕ້ອງການຍົກເລີກການນຳໃຊ້ບັດ, ເຈົ້າຂອງບັດຕ້ອງເຂົ້າມາຂຽນໃບສະເໜີດ້ວຍຕົນເອງພ້ອມທັງສົ່ງບັດຄືນໃຫ້ທະນາຄານ (ທັງບັດຫຼັກ ແລະ ບັດເສີມ) ແລະ ຕ້ອງຊຳລະໜີ້ສິນທີ່ຍັງເຫຼືອທັງໝົດເສຍກ່ອນ, ໃນກໍລະນີທີ່ທະນາຄານຫາກພົບເຫັນມີລາຍການທີ່ຄົງຄ້າງ ຫຼື ມີລາຍການຮຽກເກັບມາຕາມພາຍຫຼັງທີ່ແຈ້ງປິດບັດແລ້ວ ເຈົ້າຂອງບັດຕ້ອງມີພັນທະ ແລະ ຄວາມຮັບຜິດຊອບໃນການຊຳລະໜີ້ທັງໝົດຄືນໃຫ້ກັບທະນາຄານໂດຍບໍ່ມີສິດຮຽກຮ້ອງໃດໆ.

**11**. ທຄຕລ ຈະສົ່ງຫຼັກຊັບຄ້ຳປະກັນ/ປິດບັນຊີຄ້ຳປະກັນ ໃຫ້ເຈົ້າຂອງບັດ ເມື່ອຄົບ 45 ວັນ ນັບແຕ່ມື້ຂຽນໃບສະເໜີຂໍຍົກເລີກການນຳໃຊ້ບັດ, ຍົກເວັ້ນກໍລະນີທີ່ເອກະສານບໍ່ຄົບຖ້ວນ ຫຼື ບໍ່ຢູ່ໃນເງື່ອນໄຂທີ່ສາມາດປິດບັດໄດ້ໃນມື້ທີ່ມາຂຽນໃບສະເໜີ ແມ່ນທະນາຄານຈະເລື່ອນການປິດບັນຊີຄ້ຳປະກັນອອກໄປຕາມຕົວຈິງ.

- ໂດຍການລົງນາມ ແລະ ລາຍເຊັນ, ຂ້າພະເຈົ້າໄດ້ອ່ານ ແລະ ເຂົ້າໃຈທຸກຂໍ້ແນະນຳ ແລະ ເງື່ອນໄຂການນຳໃຊ້ຂ້າງເທິງນີ້ເປັນຢ່າງດີ, ຂ້າພະເຈົ້າຍິນຍອມ ແລະ ພ້ອມປະຕິບັດຕາມລະບຽບທີ່ທະນາຄານວາງອອກຢ່າງເຂັ້ມງວດ ແລະ ຈະບໍ່ຮຽກຮ້ອງຕໍ່ວ່າໃດໆ.

(ຜູ້ສະໝັກຮັກສາໄວ້ 1 ສະບັບ)

**ເຊັນຮັບຮູ້ຈາກຜູ້ສະໝັກ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

**ທຄຕລ.ສບ.2022 ( V.1 )**

# ຂໍ້ຕົກລົງສັນຍາການນຳໃຊ້ບັດສາກົນ ທຄຕລ

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** (ເຊິ່ງໃນສັນຍານີ້ເອີ້ນວ່າ:“ທຄຕລ”) ແລະ **ຜູ້ອອກບັດ ຊື່ທ່ານ**.......................................................................................................ເຊິ່ງໃນສັນຍາສະບັບນີ້ເອີ້ນວ່າ “ລູກຄ້າຜູ້ຖືບັດ” (ຄູ່ສັນຍາ) ໄດ້ຕົກລົງເປັນເອກະພາບກັນເພື່ອເຮັດສັນຍາການນຳໃຊ້ບັດສາກົນ ທຄຕລ ສະບັບນີ້ຂຶ້ນ ໂດຍມີລາຍລະອຽດດັ່ງນີ້:

**<u>ມາດຕາ 1:</u> ນິຍາມຄຳສັບ**

1. ທະນາຄານ: ໝາຍເຖິງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ);
2. ເຈົ້າຂອງບັດ: ແມ່ນຜູ້ຖືບັດຫຼັກ ແລະ ບັດເສີມທີ່ທະນາຄານໄດ້ອອກໃຫ້ພາຍໃຕ້ສັນຍາສະບັບນີ້;
3. ATM: ແມ່ນຕູ້ທີ່ໃຫ້ບໍລິການຖອນເງິນສົດ ແລະ ກວດກາຍອດເງິນອັດຕະໂນມັດ;
4. EDC (ເຄື່ອງຮັບບັດ): ແມ່ນເຄື່ອງຮັບບໍລິການຊຳລະເງິນອີເລັກໂທນິກ;
5. ບັດສາກົນ: ແມ່ນບັດອີເລັກໂທນິກທີ່ສາມາດໃຊ້ແທນເງິນສົດໃນການຊຳລະສະສາງໂດຍແມ່ນ ທຄຕລ ອອກໃຫ້;
6. ໃບແຈ້ງໜີ້ (Statement): ແມ່ນໃບຮຽກເກັບເງິນຄືນຈາກການນຳໃຊ້ບັດຂອງເຈົ້າຂອງບັດທີ່ຕ້ອງໄດ້ຈ່າຍຄືນໃຫ້ທະນາຄານຕາມກຳນົດເວລາທີ່ໄດ້ຕົກລົງກັນໄວ້ໃນເງື່ອນໄຂ ແລະ ສັນຍາທັງສອງຝ່າຍ.

**<u>ມາດຕາ 2:</u> ຈຸດປະສົງ**

1. ລູກຄ້າຜູ້ຖືບັດມີຈຸດປະສົງນຳໃຊ້ບັດຈາກທະນາຄານ ເພື່ອນຳໃຊ້ເຂົ້າໃນການຊຳລະສະສາງຂອງຕົນ ຕາມປະເພດບັດທີ່ໄດ້ລະບຸໄວ້ໃນແບບຟອມລົງທະບຽນຂໍນຳໃຊ້ບັດທີ່ຕິດຄັດມາພ້ອມນີ້ ເຊິ່ງລູກຄ້າຍິນດີປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນສັນຍາ, ລະບຽບການຕ່າງໆທີ່ກ່ຽວຂ້ອງຂອງທະນາຄານ ແລະ ກົດລະບຽບການອອກບັດ ແລະ ນຳໃຊ້ບັດຂອງສູນບັດສາກົນ;
2. ທະນາຄານຕົກລົງອອກບັດໃຫ້ລູກຄ້າຜູ້ຖືບັດພາຍໃຕ້ເງື່ອນໄຂໃນສັນຍາສະບັບນີ້.

**<u>ມາດຕາ 3:</u> ບັດຫຼັກ ແລະ ບັດເສີມ**

1. ບັດຫຼັກ ແມ່ນບັດທີ່ທະນາຄານອອກໃຫ້ລູກຄ້າຜູ້ຖືບັດ, ຜູ້ຖືບັດຫຼັກນີ້ຈະຖືກເອີ້ນວ່າ “ເຈົ້າຂອງບັດຫຼັກ”; ບັດເສີມແມ່ນທະນາຄານອອກໃຫ້ບຸກຄົນອື່ນຕາມການສະເໜີຂອງເຈົ້າຂອງບັດຫຼັກ, ຜູ້ຖືບັດເສີມນີ້ຈະຖືກເອີ້ນວ່າ “ເຈົ້າຂອງບັດເສີມ“. ເຈົ້າຂອງບັດຫຼັກສາມາດສະເໜີຂໍອອກບັດເສີມໄດ້ສູງສຸດສອງ (02) ບັດ, ເຈົ້າຂອງບັດຫຼັກທີ່ນຳໃຊ້ບັດໃນນາມບໍລິສັດ ຫຼື ອົງກອນ ແມ່ນບໍ່ສະມາດຂໍອອກບັດເສີມດ້ວຍໂຕເອງໄດ້ (ຕ້ອງໄດ້ຮັບການຢັ້ງຢືນຈາກບໍລິສັດ ຫຼື ອົງກອນນັ້ນໆ).
2. ເຈົ້າຂອງບັດຫຼັກ ແລະ ບັດເສີມຕ້ອງນຳໃຊ້ບັນຊີ ແລະ ວົງເງິນສິນເຊື່ອອັນດຽວກັນ, ເຊິ່ງບັນດາລາຍການເຄື່ອນໄຫວຂອງທັງສອງບັດຈະປະກົດຢູ່ໃນໃບແຈ້ງໜີ້ຂອງວັນທີ 25 ໃນແຕ່ລະເດືອນ. ເຈົ້າຂອງບັດຫຼັກຈະໄດ້ຮັບໃບແຈ້ງໜີ້ຂອງທັງບັດຫຼັກ ແລະ ບັດເສີມທັງໝົດ, ເຈົ້າຂອງບັດເສີມຈະໄດ້ຮັບໃບແຈ້ງໜີ້ສະເພາະບັດຂອງຕົນເທົ່ານັ້ນ; ກໍລະນີບັດຫຼັກ ຫຼື ບັດເສີມບໍ່ມີລາຍການເຄື່ອນໄຫວໃນເດືອນ ແມ່ນລະບົບບັດຈະບໍ່ໄດ້ສົ່ງ Statement ຂອງບັດດັ່ງກ່າວໃຫ້ຜູ້ຖືບັດ.
3. ເຈົ້າຂອງບັດຫຼັກຕົກລົງຮັບຜິດຊອບທຸກໆລາຍການເຄື່ອນໄຫວທີ່ປະກົດຢູ່ໃນໃບແຈ້ງໜີ້ ເຊິ່ງຖືວ່າເປັນໜີ້ຂອງເຈົ້າຂອງບັດຫຼັກທີ່ຕ້ອງຊຳລະຄືນໃຫ້ກັບທະນາຄານ ລວມທັງລາຍການທີ່ເກີດນຳບັດຫຼັກ ແລະ ບັດເສີມ.
4. ເຈົ້າຂອງບັດຫຼັກມີສິດສະເໜີໃຫ້ທະນາຄານຍົກເລີກການນຳໃຊ້ບັດເສີມຢ່າງເປັນລາຍລັກອັກສອນ. ຖ້າເຈົ້າຂອງບັດຫຼັກຕ້ອງການຍົກເລີກການນຳໃຊ້ບັດຂອງຕົນເອງ ບັດເສີມທັງໝົດກໍ່ຈະຖືກຍົກເລີກໄປນຳໂດຍອັດຕະໂນມັດ.
5. ການນຳໃຊ້ບັດໂດຍເຈົ້າຂອງບັດຫຼັກ ແລະ ເຈົ້າຂອງບັດເສີມ ຕ້ອງປະຕິບັດຕາມສັນຍາສະບັບນີ້ ລວມທັງລະບຽບການອອກບັດ ແລະ ບໍລິການບັດຂອງທະນາຄານ ແລະ ສູນບັດສາກົນ.

**<u>ມາດຕາ 4:</u> ອັດຕາດອກເບ້ຍ, ຄ່າທຳນຽມ ແລະ ລາຍການເຄື່ອນໄຫວຂອງການນຳໃຊ້ບັດ**

1. ເຈົ້າຂອງບັດຕ້ອງຊຳລະຍອດຕ່ຳສຸດ ຫຼື ຊຳລະໜີ້ທັງໝົດໃຫ້ທັນກຳນົດເວລາທີ່ໄດ້ແຈ້ງໃນໃບແຈ້ງໜີ້ຂອງແຕ່ລະເດືອນເພື່ອຍົກເວັ້ນດອກເບ້ຍ ແລະ ຄ່າທຳນຽມປັບໄໝການຊຳລະຊ້າ.
2. ໃນກໍລະນີທີ່ເຈົ້າຂອງບັດບໍ່ສາມາດຊາລະໄດ້ຍອດຕ່າສຸດຂອງໜີ້ທັງໝົດທີ່ໄດ້ແຈ້ງໃນໃບແຈ້ງໜີ້, ທຄຕລ ຈະໄດ້ຄິດໄລ່ດອກເບ້ຍ ແລະ ຄ່າທຳນຽມປັບໄໝການຊຳລະຊ້າ ເຊິ່ງຈະສະແດງຢູ່ໃນໃບແຈ້ງໜີ້ຮອບວຽນຕໍ່ໄປ. ຍອດເຫຼືອໜີ້ທີ່ຍັງຄ້າງຈ່າຍແມ່ນຈະຖືກຄິດໄລ່ດອກເບ້ຍນັບຕັ້ງແຕ່ມື້ທີ່ລາຍການນຳໃຊ້ບັດເກີດຂຶ້ນຈົນເຖິງມື້ທີ່ສາມາດຊຳລະໜີ້ໄດ້ຄົບຖ້ວນ.
3. ເຈົ້າຂອງບັດເຄຼດິດຈະໄດ້ຮັບໃບແຈ້ງໜີ້ຈາກທະນາຄານໃນແຕ່ລະເດືອນ (ຖ້າມີລາຍການເຄື່ອນໄຫວຂອງບັດ) ທາງອີເມວ, ສຳລັບບັດເດບິດ ເຈົ້າຂອງບັດຕ້ອງໄດ້ເຂົ້າມາພົວພັນເອົາໃບລາຍງານການເຄື່ອນໄຫວບັນຊີ (Statement) ຂອງຕົນເອງຢູ່ປ່ອງບໍລິການຂອງ ທຄຕລ. ໃບແຈ້ງໜີ້ ແລະໃບລາຍງານເຄື່ອນໄຫວບັນຊີ ຍັງສາມາດກວດເບິ່ງຜ່ານ BCELOne ໄດ້.
4. ລູກຄ້າຜູ້ຖືບັດຍິນດີຈ່າຍຄ່າທຳນຽມຊຳລະໜີ້ຊ້າ ແລະ ຄ່າທຳນຽມອື່ນໆໃຫ້ກັບທະນາຄານຕາມລຳດັບ ໃນກໍລະນີທີ່ຜູ້ຖືບັດບໍ່ສາມາດຊຳລະໜີ້ໃຫ້ກັບທະນາຄານໄດ້ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນໃບແຈ້ງໜີ້.
5. ເຈົ້າຂອງບັດຮັບຊາບໃນການຈ່າຍຄ່າທານຽມຖອນເງິນສົດຜ່ານເຄື່ອງຮູດບັດ ແລະ ຄ່າທານຽມຖອນເງິນສົດຈາກຕູ້ ATM ນອກເຄືອຂ່າຍ ທຄຕລ.

**<u>ມາດຕາ 5:</u> ການຊຳລະສະສາງໜີ້**

1. ການຊຳລະໜີ້ລວມມີ: ຄ່າທຳນຽມບຳລຸງຮັກສາປະຈຳປີ, ດອກເບ້ຍ ແລະ ຄ່າທຳນຽມຊຳລະຊ້າ, ຄ່າທຳນຽມຖອນເງິນສົດຜ່ານເຄື່ອງຮັບບັດ, ຄ່າທຳນຽມຖອນເງິນສົດຈາກຕູ້ ATM ນອກເຄືອຂ່າຍ ທຄຕລ, ບັນດາລາຍການຖອນເງິນສົດພາຍໃນຕູ້ ທຄຕລ, ລາຍການຊຳລະຄ່າສິນຄ້າ ແລະ ບໍລິການຕ່າງໆທີ່ເກີດຂຶ້ນແຕ່ລະມື້ ທີ່ໄດ້ໂອນເຂົ້າໃນລະບົບຂອງທະນາຄານ.
2. ທຸກລາຍການເຄື່ອນໄຫວຂອງບັດ ທັງລາຍການທີ່ມີການນຳໃຊ້ລະຫັດບັດ (PIN), ລາຍການທີ່ມີ ຫຼື ບໍ່ມີລາຍເຊັນຂອງເຈົ້າຂອງບັດ, ທຄຕລ ຈະຖືວ່າລາຍການເຄື່ອນໄຫວດັ່ງກ່າວເປັນຫຼັກຖານຢັ້ງຢືນວ່າເຈົ້າຂອງບັດໄດ້ດຳເນີນການນຳໃຊ້ບັດແທ້, ເຊິ່ງເຈົ້າຂອງບັດມີໜ້າທີ່ຊຳລະຈຳນວນເງິນທີ່ໃຊ້ໄປນັ້ນຄືນໃຫ້ທະນາຄານຕາມລະບຽບ.
3. ຖ້າເຈົ້າຂອງບັດນຳໃຊ້ບັດເພື່ອຈອງທີ່ພັກ ຫຼື ຄ່າເດີນທາງ ແຕ່ບໍ່ສາມາດເດີນທາງ ຫຼື ບໍ່ສາມາດລົບລ້າງການຈອງນັ້ນລ່ວງໜ້າໄດ້, ຜູ້ໃຫ້ບໍລິການມີສິດເກັບຄ່າສິນຄ້າ ຫຼື ຄ່າບໍລິການນັ້ນນຳເຈົ້າຂອງບັດຕາມເງື່ອນໄຂສັນຍາ ບວກກັບຄ່າທຳນຽມອື່ນໆທີ່ກ່ຽວຂ້ອງ (ຖ້າມີ).
4. ທະນາຄານຈະສົ່ງໃບແຈ້ງໜີ້ (Credit Card Statement) ໃຫ້ເຈົ້າຂອງບັດເລີ່ມແຕ່ວັນທີ 25 ຂອງທຸກໆເດືອນຜ່ານທາງອີເມວທີ່ໄດ້ລະບຸໄວ້ໃນແບບຟອມສະໝັກບັດ. ເຈົ້າຂອງບັດມີພັນທະຕິດຕາມ ແລະ ກວດສອບໃບແຈ້ງໜີ້ຂອງຕົນ ແລະ ຊຳລະໜີ້ຕາມກຳນົດໃນໃບແຈ້ງໜີ້ທີ່ທະນາຄານສົ່ງໃຫ້. ໃນກໍລະນີທີ່ບໍ່ໄດ້ຮັບໃບແຈ້ງໜີ້ ບໍ່ວ່າກໍລະນີໃດໆກໍ່ຕາມ, ເຈົ້າຂອງບັດຍັງມີພັນທະ ແລະ ໜ້າທີ່ໃນການຊຳລະໜີ້ທີ່ເກີດຂຶ້ນຈາກການນຳໃຊ້ບັດຂອງຕົນໃນແຕ່ລະເດືອນເມື່ອຮອດກຳນົດ.
5. ສຳລັບບັດທີ່ເລືອກຮູບແບບການຊຳລະໜີ້ແບບໂອໂຕ, ເຈົ້າຂອງບັດຕ້ອງໄດ້ມອບເງິນເຂົ້າບັນຊີກ່ອນ 12 ໂມງສວາຍ (12:00 PM) ຫຼື ຮັກສາຍອດເງິນໄວ້ໃນບັນຊີໃຫ້ພຽງພໍຊຳລະໜີ້ໃນມື້ທີ່ລະບົບຈະດຳເນີນການຕັດໂອໂຕ.
6. ໃນກໍລະນີທີ່ເຈົ້າຂອງບັດຫາກພົບເຫັນລາຍການທີ່ບໍ່ໄດ້ນຳໃຊ້, ເຈົ້າຂອງບັດຕ້ອງແຈ້ງທະນາຄານພາຍໃນ 7 ວັນນັບຈາກມື້ທີ່ໄດ້ຮັບໃບແຈ້ງໜີ້. ເຈົ້າຂອງບັດສາມາດສະເໜີທະນາຄານເພື່ອຂໍກວດລາຍການນຳໃຊ້ບັດຄືນ ແລະ ທະນາຄານອາດສະເໜີໃຫ້ເຈົ້າຂອງບັດປະກອບເອກະສານເພື່ອຂໍເຮັດລາຍການຮຽກເກັບເງິນຄືນ ພ້ອມທັງຈ່າຍຄ່າທຳນຽມທີ່ຕິດພັນ (ຖ້າມີ). ຖ້າຫາກເຈົ້າຂອງບັດບໍ່ໄດ້ແຈ້ງທະນາຄານພາຍໃນເວລາທີ່ກຳນົດ, ທະນາຄານຈະຖືວ່າເຈົ້າຂອງບັດໄດ້ຍອມຮັບຕໍ່ລາຍການເຄື່ອນໄຫວດັ່ງກ່າວ ແລະ ຍິນດີຊຳລະຍອດນຳໃຊ້ດັ່ງກ່າວຕາມໃບແຈ້ງໜີ້.

**<u>ມາດຕາ 6:</u> ສິດ ແລະ ໜ້າທີ່ຮັບຜິດຊອບຂອງເຈົ້າຂອງບັດ**

1. ເຈົ້າຂອງບັດມີສິດໃຊ້ບັດແທນເງິນສົດເພື່ອຊຳລະຄ່າສິນຄ້າ, ຄ່າບໍລິການ ແລະ ການເຄື່ອນໄຫວຕ່າງໆຜ່ານເຄື່ອງຮູດ EDC ຫຼື ຕາມຕູ້ ATM ໃນການຖອນເງິນສົດ, ແຕ່ຕ້ອງຢູ່ໃນເງື່ອນໄຂທີ່ໄດ້ຕົກລົງກັນໄວ້ກັບທະນາຄານ;
2. ເຈົ້າຂອງບັດມີສິດເລືອກຊຳລະໜີ້ໃຫ້ທະນາຄານດ້ວຍຮູບແບບ Manual Payment (ຈ່າຍດ້ວຍເງິນສົດຜ່ານປ່ອງບໍລິການ ຫຼື ຈ່າຍຜ່ານ BCELOne ໄດ້ທຸກເວລາຫຼັງຈາກໄດ້ຮັບໃບແຈ້ງໜີ້) ຫຼື Auto Payment (ໃຫ້ທະນາຄານຕັດຈາກບັນຊີເງິນຝາກຂອງຕົນທີ່ເປີດກັບ ທຄຕລ ແບບອັດຕະໂນມັດ ຕາມມື້ທີ່ກຳນົດໄວ້ໃນໃບແຈ້ງໜີ້ແຕ່ລະເດືອນ).
3. ເຈົ້າຂອງບັດສາມາດມາຮັບບັດດ້ວຍຕົນເອງທີ່ປ່ອງບໍລິການ ທຄຕລ ຫຼື ສາມາດມອບສິດໃຫ້ບຸກຄົນອື່ນເປັນລາຍລັກອັນສອນ ເພື່ອມາຮັບບັດແທນໄດ້. ໃນກໍລະນີທີ່ເຈົ້າຂອງບັດສະເໜີໃຫ້ທະນາຄານຈັດສົ່ງບັດໄປໃຫ້ຜ່ານໄປສະນີ, ເຈົ້າຂອງບັດຕ້ອງໄດ້ຮັບຜິດຊອບຈ່າຍຄ່າທຳນຽມຂົນສົ່ງໃຫ້ບໍລິສັດຂົນສົ່ງຕາມລະບຽບ. ຫຼັງຈາກໄດ້ຮັບບັດແລ້ວ ເຈົ້າຂອງບັດຕ້ອງພົວພັນ ທຄຕລ ຜ່ານອີເມວຫຼືໂທແຈ້ງ ເພື່ອໃຫ້ ທຄຕລ ເປີດການນຳໃຊ້ບັດໃຫ້.
4. ເຈົ້າຂອງບັດຕ້ອງເຊັນລາຍເຊັນໃສ່ຊ່ອງເຊັນຫຼັງບັດເມື່ອໄດ້ຮັບບັດຈາກທະນາຄານ. ທຸກຄັ້ງທີ່ນຳໃຊ້ບັດຊຳລະຄ່າບໍລິການຜ່ານເຄື່ອງຮັບບັດ, ເຈົ້າຂອງບັດຕ້ອງເຊັນໃສ່ໃບບິນ (Sale Slip) ໃຫ້ຄືກັບລາຍເຊັນຫຼັງບັດ. ຍົກເວັ້ນລາຍການເຄື່ອນໄຫວໂດຍຜ່ານໂທລະສັບ, ອິນເຕີເນັດ ຫຼື ລາຍການທີ່ບໍ່ຮຽກຮ້ອງໃຫ້ມີລາຍເຊັນເຈົ້າຂອງບັດ.
5. ເຈົ້າຂອງບັດມີໜ້າທີ່ຮັກສາບັດ ແລະ ຮັກສາລະຫັດບັດ (PIN) ຂອງຕົນເອງເປັນຄວາມລັບ. ບໍ່ຄວນເປີດເຜີຍໃຫ້ຄົນອື່ນຮູ້ເດັດຂາດບໍ່ວ່າທາງກົງ ແລະ ທາງອ້ອມ. ຫ້າມເດັດຂາດບໍ່ໃຫ້ມີການມອບໂອນບັດ ແລະ ລະຫັດບັດໃຫ້ຄົນອື່ນນຳໃຊ້. ເຈົ້າຂອງບັດຮັບຮູ້ວ່າການນຳໃຊ້ບັດແມ່ນມີຄວາມສ່ຽງທີ່ອາດຈະຖືກບຸກຄົນອື່ນລັກເອົາຂໍ້ມູນຂອງບັດຂອງຕົນໄປນຳໃຊ້ ແລະ ເຈົ້າຂອງບັດຍິນດີຮັບຜິດຊອບຕໍ່ທຸກໆລາຍການເຄື່ອນໄຫວຂອງບັດທີ່ສຳເລັດ, ບໍ່ວ່າເປັນລາຍການນຳໃຊ້ໂດຍເຈົ້າຂອງບັດເອງ ຫຼື ບໍ່ກໍ່ຕາມ; ເຈົ້າຂອງບັດຕ້ອງນຳໃຊ້ບັດໃຫ້ຖືກຕາມລະບຽບຂອງທະນາຄານ, ສູນບັດສາກົນ ແລະ ບໍ່ຜິດຕໍ່ລະບຽບກົດໝາຍຂອງ ສປປ ລາວ.
6. ເພື່ອຄວາມປອດໄພໃນການນຳໃຊ້ບັດ ເຈົ້າຂອງບັດຕ້ອງລົງທະບຽນນຳໃຊ້ບໍລິການຕ່າງໆເພື່ອຕິດຕາມ ແລະ ຄຸ້ມຄອງການເຄື່ອນໄຫວບັດຕົນເອງເຊັ່ນ: BCELOne, SMS Banking ແລະ ບໍລິການອື່ນໆຕາມຄວາມເໝາະສົມ.

**<u>ມາດຕາ 7:</u> ສິດ ແລະ ໜ້າທີ່ຮັບຜິດຊອບຂອງທະນາຄານ**

1. <u>ສິດ ແລະ ໜ້າທີ່ຂອງທະນາຄານ</u>

- ທະນາຄານມີສິດຫັກໜີ້ຈາກຫຼັກຊັບຄ້ຳປະກັນຂອງເຈົ້າຂອງບັດ ແລະ ຈາກທຸກໆບັນຊີເງິນຝາກທີ່ມີນຳ ທຄຕລ ໂດຍບໍ່ຕ້ອງມີລາຍເຊັນອະນຸມັດ ໃນກໍລະນີທີ່ເຈົ້າຂອງບັດບໍ່ສາມາດຊຳລະໜີ້ຍອດຕ່ຳສຸດໄດ້ເປັນເວລາ 90 ວັນ.
- ໃນກໍລະນີທີ່ເຈົ້າຂອງບັດບໍ່ມາຮັບບັດພາຍໃນ 30 ວັນນັບຈາກມື້ນັດຮັບບັດ, ທຄຕລ ມີສິດດາເນີນການທາລາຍ ແລະ ປິດບັດເພື່ອຄວາມປອດໄພ ແລະ ທຄຕລ ຈະບໍ່ໄດ້ສົ່ງຄ່າທຳນຽມທີ່ຕິດພັນຄືນໃຫ້ເຈົ້າຂອງບັດ.
- ໃນກໍລະນີທີ່ທະນາຄານພົບເຫັນວ່າມີຄວາມຈຳເປັນຕໍ່ການຮັກສາສິດ ແລະ ຜົນປະໂຫຍດຂອງຕົນ ຫຼື ລູກຄ້າຜູ້ຖືບັດທະນາຄານມີສິດປ່ຽນແປງເງື່ອນໄຂການນຳໃຊ້ບັດ, ຈຳກັດ, ຍົກເລີກການນຳໃຊ້ບັດໂດຍບໍ່ຕ້ອງແຈ້ງລ່ວງໜ້າ.
- ທະນາຄານມີພັນທະປະຕິບັດຕາມຂໍ້ກຳນົດ ແລະ ລະບຽບຕ່າງໆກ່ຽວກັບການອອກບັດ, ການຊຳລະສະສາງດ້ວຍບັດເຄຼດິດສາກົນ ເພື່ອຮັບປະກັນສິດຜົນປະໂຫຍດຂອງເຈົ້າຂອງບັດຕາມສັນຍາ ແລະ ຮັກສາບັນດາຂໍ້ມູນຂອງເຈົ້າຂອງບັດໄວ້ເປັນຄວາມລັບ;

2. <u>ຂໍ້ຍົກເວັ້ນຄວາມຮັບຜິດຊອບຂອງທະນາຄານ</u>

- ທະນາຄານຈະບໍ່ຮັບຜິດຊອບຕໍ່ບັນຫາໃດໆດໍ່ຕາມທີ່ເກີດຈາກລະບົບການຈັດການ, ລະບົບການສື່ສານ ຫຼື ບັນຫາອື່ນໆທີ່ເກີດຂຶ້ນນອກເໜືອຄວາມສາມາດໃນການຈັດການຂອງທະນາຄານ;
- ທະນາຄານຈະບໍ່ຮັບຜິດຊອບຕໍ່ທຸກໆກໍລະນີທີ່ກະທົບເຖິງກຽດ, ຊື່ສຽງ, ຄວາມເຊື່ອຖືຂອງເຈົ້າຂອງບັດໃນການຖືກເກັບບັດຄືນ ຫຼື ຮຽກຮ້ອງໃຫ້ສົ່ງບັດຄືນ.
- ທະນາຄານຈະບໍ່ຮັບຜິດຊອບຕໍ່ການຂົນສົ່ງສິນຄ້າ, ຄຸນນະພາບສິນຄ້າ ຫຼື ການບໍລິການທີ່ໄດ້ຊຳລະດ້ວຍບັດ, ແຕ່ທະນາຄານມີສິດຫັກເງິນໃນບັນຊີຂອງເຈົ້າຂອງບັດຕາມລາຄາຂອງລາຍການເຄື່ອນໄຫວດັ່ງກ່າວ ເຖິງແມ່ນວ່າຈະໄດ້ຮັບສິນຄ້າ ຫຼື ບໍລິການນັ້ນໆຫຼືບໍ່ກໍ່ຕາມ.
- ທະນາຄານຈະບໍ່ຮັບຜິດຊອບຕໍ່ທຸກໆຄວາມເສຍຫາຍທີ່ເກີດຂຶ້ນຈາກຜູ້ໃຫ້ບໍລິການຫຼືຮ້ານຄ້າທີ່ເຈົ້າຂອງບັດໄປໃຊ້ບໍລິການ, ເຈົ້າຂອງບັດຕ້ອງໄດ້ຮັບຜິດຊອບຕໍ່ການຂໍເຮັດລາຍການຮຽກເກັບເງິນຄືນຈາກຮ້ານຄ້າໂດຍກົງ. ເຈົ້າຂອງບັດບໍ່ສາມາດຢຸດຕິຫຼືຍົກເລີກການຊຳລະເງິນໃຫ້ກັບ ທຄຕລ ຕໍ່ກັບລາຍການຮຽກເກັບຕ່າງໆທີ່ຕິດພັນກັບການໃຊ້ບໍລິການບັດນຳຜູ້ໃຫ້ບໍລິການນັ້ນ.

**<u>ມາດຕາ 8:</u> ການປ່ຽນບັດ, ການອອກບັດໃໝ່ ແລະ ການຍົກເລີກການນຳໃຊ້ບັດ**

1.ໃນກໍລະນີເຈົ້າຂອງບັດເຮັດບັດຕົກເຮ່ຍເສຍຫາຍ, ບັດເຊື່ອມ ຫຼື ຕ້ອງການປ່ຽນບັດໃໝ່, ເຈົ້າຂອງບັດສາມາດເຂົ້າມາປະກອບເອກະສານສະເໜີເພື່ອຂໍອອກບັດໃໝ່ ແລະ ຈ່າຍຄ່າທຳນຽມຕາມລະບຽບທີ່ໄດ້ວາງອອກແຕ່ລະໄລຍະ.
2.ອາຍຸການນຳໃຊ້ຂອງບັດແມ່ນສະແດງຢູ່ເທິງໜ້າບັດ (ເດືອນ/ປີ), ທະນາຄານຈະຂຶ້ນຂໍ້ຄວາມແຈ້ງເຕືອນຜ່ານ BCELOne ລ່ວງໜ້າ 3 ເດືອນໃຫ້ເຈົ້າຂອງບັດຮັບຊາບກ່ອນບັດຈະໝົດອາຍຸ, ເຈົ້າຂອງບັດມີພັນທະຕ້ອງຕິດຕາມອາຍຸບັດຂອງຕົນເອງເຖິງແມ່ນວ່າຈະໄດ້ຮັບແຈ້ງເຕືອນຈາກທະນາຄານຫຼືບໍ່ກໍ່ຕາມ. ຖ້າຕ້ອງການຕໍ່ອາຍຸບັດ, ເຈົ້າຂອງບັດຕ້ອງແຈ້ງ/ຢັ້ງຢືນເປັນລາຍລັກອັກສອນກ່ອນວັນທີ 20 ຂອງເດືອນທີ່ບັດຈະໝົດອາຍຸ ພ້ອມທັງສົ່ງບັດເກົ່າຄືນ. ສ່ວນບັດທີ່ບໍ່ໄດ້ມາສະເໜີຕໍ່ອາຍຸເກີນ 45 ວັນນັບຈາກເດືອນທີ່ໝົດອາຍຸ ແມ່ນລະບົບຈະປິດບັດຖາວອນ.
3. ລະບົບຈະຄິດໄລ່ຄ່າທຳນຽມບຳລຸງຮັກສາປະຈຳປີ 1 ຄັ້ງຕໍ່ປີພາຍໃນເດືອນດຽວກັນ ແລະ ອາດສະແດງຢູ່ໃນຮອບວຽນຂອງໃບແຈ້ງໜີ້ໃນເດືອນນັ້ນ. ເຈົ້າຂອງບັດມີພັນທະໃນການຊຳລະຄ່າທຳນຽມບຳລຸງຮັກສາປະຈຳປີຕາມລະບຽບໃຫ້ທະນາຄານ ເຖິງແມ່ນວ່າບັດດັ່ງກ່າວຈະຢູ່ໃນສະຖານະໝົດອາຍຸ ຫຼື ລໍຖ້າການຕໍ່ອາຍຸ ແຕ່ຍັງບໍ່ໄດ້ຖືກລະບົບປິດບັດ. ລະບົບທະນາຄານຈະຢຸດຕິການຄິດໄລ່ຄ່າທຳນຽມບາລຸງຮັກສາປະຈາປີພາຍຫຼັງທີ່ບັດໄດ້ຖືກປິດຖາວອນແລ້ວ.
4. ໃນກໍລະນີປິດບັດຖາວອນ ທັງການສະເໜີຈາກເຈົ້າຂອງບັດຫຼືການຖືກປິດບັດໂດຍພາກສ່ວນທະນາຄານ, ເຈົ້າຂອງບັດຍັງມີພັນທະຮັບຜິດຊອບຕໍ່ລະບຽບເງື່ອນໄຂຂອງທະນາຄານຈົນກວ່າຈະຊຳລະໜີ້ຄົງຄ້າງຄົບຖ້ວນ ແລະ ບັດຖືກປິດສຳເລັດ.
5. ທະນາຄານມີສິດອາຍັດ, ຍົກເລີກການນຳໃຊ້ບັດໃນກໍລະນີດັ່ງລຸ່ມນີ້:

- ຫຼັງຈາກ 90 ວັນ ນັບແຕ່ມື້ຮອດກຳນົດຊຳລະໜີ້ ແຕ່ເຈົ້າຂອງບັດບໍ່ເຂົ້າມາຊຳລະໜີ້ ຫຼື ຊຳລະໜີ້ສ່ວນໃດສ່ວນໜຶ່ງແຕ່ໜ້ອຍກວ່າຈຳນວນຍອດຕ່ຳສຸດທີ່ທະນາຄານກຳນົດໄວ້ໃນໃບແຈ້ງໜີ້ຂອງແຕ່ລະເດືອນ.
- ເຈົ້າຂອງບັດໄດ້ໃຊ້ຈ່າຍເກີນວົງເງິນທີ່ທະນາຄານອະນຸມັດໃຫ້ຕາມເງື່ອນໄຂ ແລະ ສັນຍາທີ່ຕົກລົງກັນໄວ້.
- ເຈົ້າຂອງບັດລະເມີດລະບຽບ ແລະ ເງື່ອນໄຂກ່ຽວກັບການນຳໃຊ້ບັດ ຫຼື ລະເມີດກົດໝາຍຂອງລັດທີ່ມີຜົນສະທ້ອນເຖິງການນຳໃຊ້ບັດ ແລະ ບັນດາກໍລະນີຕ່າງໆທີ່ພົວພັນເຖິງການປອມແປງ ແລະ ການຄຸ້ມຄອງຄວາມສ່ຽງ.
- ທະນາຄານສາມາດຮຽກເກັບບັດຄືນບໍ່ວ່າເວລາໃດກໍ່ຕາມ ແຕ່ຈະແຈ້ງຢ່າງເປັນລາຍລັກອັກສອນໃຫ້ເຈົ້າຂອງບັດຊາບເຫດຜົນໃນການເກັບບັດຄືນຂອງທະນາຄານ.

6. ກໍລະນີບັດເສຍ, ຖືກລັກ, ຫຼື ສົງໃສວ່າເລກບັດ ແລະ ເລກລະຫັດບັດຂອງຕົນມີຄົນອື່ນຮູ້ ຕ້ອງປະຕິບັດດັ່ງນີ້:

- ເຈົ້າຂອງບັດຕ້ອງລ໋ອກບັດໄວ້ຜ່ານ BCELOne ຫຼື ໂທຫາ Call Center 1555 ໂດຍກົງເພື່ອລ໋ອກບັດໃຫ້. ຫຼັງຈາກນັ້ນຕ້ອງເຂົ້າໄປແຈ້ງ ທຄຕລ ທີ່ຢູ່ໂດຍດ່ວນເພື່ອປະກອບເອກະສານຂໍອອກບັດໃໝ່ ພ້ອມທັງຈ່າຍຄ່າທຳນຽມ ແລະ ຕ້ອງສົ່ງບັດເກົ່າຄືນໃຫ້ ທຄຕລ ເພື່ອທຳລາຍ (ຖ້າມີ).

7.ຖ້າຫາກລູກຄ້າຕ້ອງການຍົກເລີກການສະໝັກ ແລະ ນຳໃຊ້ບັດ ບໍ່ວ່າໃນກໍລະນີໃດໆກໍ່ຕາມ, ທຄຕລ ຈະບໍ່ສົ່ງຄືນຄ່າທຳນຽມທີ່ໄດ້ຫັກໄປແລ້ວໃຫ້ແກ່ລູກຄ້າໃນທຸກກໍລະນີ.

- ກໍລະນີປິດບັດບໍ່ມີບັດມາສົ່ງຄືນ, ທຄຕລ ຈະເກັບຄ່າທຳນຽມຕາມລະບຽບທີ່ໄດ້ປະກາດໃຊ້ໃນແຕ່ລະໄລຍະ.

**<u>ມາດຕາ 9:</u> ການດັດແກ້ສັນຍາ**

1.ທະນາຄານມີສິດດັດແກ້ເງື່ອນໄຂຕ່າງໆຂອງສັນຍາສະບັບນີ້(ລວມທັງການເພີ້ມເງື່ອນໄຂໃໝ່ຫຼືການປ່ຽນແທນເງື່ອນໄຂເກົ່າ). ເຈົ້າຂອງບັດສາມາດເຂົ້າຕິດຕາມເວັບໄຊຂອງທະນາຄານເພື່ອອ່ານເງື່ອນໄຂສັນຍາສະບັບໃໝ່ ເຊິ່ງເງື່ອນໄຂສັນຍາສະບັບໃໝ່ນີ້ຈະຖືກນຳໃຊ້ປ່ຽນແທນເງື່ອນໄຂສັນຍາສະບັບເກົ່າ.
2.ຖ້າເຈົ້າຂອງບັດບໍ່ເຫັນດີໃນການດັດແກ້ສັນຍາ, ເຈົ້າຂອງບັດມີສິດເຂົ້າມາທະນາຄານເພື່ອສະເໜີຂໍຍົກເລີກການນຳໃຊ້ບັດຢ່າງເປັນລາຍລັກອັກສອນ. ຖ້າເຈົ້າຂອງບັດບໍ່ໄດ້ແຈ້ງ ແລະ ຍັງສືບຕໍ່ນຳໃຊ້ບັດດັ່ງກ່າວຫຼັງການດັດແກ້ສັນຍາແມ່ນຖືວ່າເຈົ້າຂອງບັດຍອມຮັບການດັດແກ້ເງື່ອນໄຂສັນຍາທັງໝົດ.

**<u>ມາດຕາ 10:</u> ກົດໝາຍອ້າງອີງກ່ຽວກັບການແກ້ໄຂຂໍ້ຂັດແຍ້ງ**

1. ສັນຍາສະບັບນີ້ໄດ້ຮັບການຄຸ້ມຄອງຈາກກົດໝາຍຂອງປະເທດ ສ.ປ.ປ ລາວ ແລະ ບັນດາລະບຽບກ່ຽວກັບການອອກບັດ, ການນຳໃຊ້ ແລະ ຊຳລະສະສາງບັດເດບິດ ແລະ ບັດເຄຼດິດສາກົນ.
2. ຖ້າຫາກມີຂໍ້ຂັດແຍ່ງເກີດຂຶ້ນ ທັງສອງຝ່າຍຈະເຂົ້າຮ່ວມແກ້ໄຂ ແລະ ໄກ່ເກ່ຍເຈລະຈາຕົກລົງກັນເສຍກ່ອນ, ກໍລະນີທີ່ບໍ່ສາມາດຕົກລົງກັນໄດ້ ຫຼື ແກ້ໄຂບໍ່ສຳເລັດ ແຕ່ລະຝ່າຍສາມາດນຳຄະດີຂຶ້ນຮ້ອງຟ້ອງຕໍ່ສານແຫ່ງ ສປປ ລາວ ເພື່ອດຳເນີນການແກ້ໄຂຕາມຂັ້ນຕອນ.

**<u>ມາດຕາ 11:</u> ຂໍ້ບັງຄັບໃຊ້ຂອງເຈົ້າຂອງບັດ**

- ສັນຍາສະບັບນີ້ມີ 01 ໜ້າ ແລະ ໄດ້ເຮັດເປັນ 02 ສະບັບ ເຊິ່ງມີເນື້ອໃນອັນດຽວກັນ; ຄູ່ສັນຍາໄດ້ກວດກາ, ເຂົ້າໃຈ ແລະ ຍອມຮັບທຸກໆເນື້ອໃນ ແລະ ລາຍລະອຽດຂອງສັນຍາ ແລະ ຮັບຮອງວ່າຖືກຕ້ອງຕາມຈຸດປະສົງແລ້ວຈິ່ງພ້ອມກັນລົງລາຍເຊັນໄວ້ເພື່ອເປັນຫຼັກຖານໃນການປະຕິບັດຕໍ່ໄປ.
- ສັນຍາສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** **ເຈົ້າຂອງບັດ**